ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 1050 /ຮສສ

ນະຄອນຫລວງວຽງຈັນ, ວັນທີ 25 ມີນາ 2022

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງວິສາຫະກິດ ບໍລິການຈັດຫາງານ

- ອີງຕາມ ກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ສະບັບເລກທີ 43/ສພຊ, ວັນທີ 24 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ສະບັບເລກທີ 245/ລບ, ລົງວັນທີ 22 ພຶດສະພາ 2020;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 602/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມພັດທະນາສີມືແຮງງານ ແລະ ຈັດຫາງານ ສະບັບເລກທີ 0199/ພຈງ, ລົງວັນທີ 10 ມີນາ 2022.

ລັດຖະມົນຕີ ອອກຂໍ້ຕົກລົງ

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງການເຄື່ອນໄຫວທຸລະກິດບໍລິການຈັດຫາງານ ໃຫ້ມີຄວາມເປັນເອກະພາບ, ສະເໝີພາບ, ລວມສູນ ແລະ ມີປະສິດທິພາບຕາມກົດໝາຍ ແລະ ລະບຽບການໃນຂອບເຂດທົ່ວປະເທດ.

**ມາດຕາ 2 ການຄຸ້ມຄອງວິສາຫະກິດບໍລິການຈັດຫາງານ**

ການຄຸ້ມຄອງວິສາຫະກິດບໍລິການຈັດຫາງານ ແມ່ນຂະບວນການຄົ້ນຄວ້າໃນການອະນຸຍາດສ້າງຕັ້ງ, ການຕິດຕາມ, ການກວດກາ, ການປະເມີນຜົນ ແລະ ການດຳເນີນມາດຕະການຕ່າງໆ ຕໍ່ກັບການເຄື່ອນໄຫວດຳເນີນທຸລະກິດບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ.

ມາດຕາ 3 ການອະທິບາຍຄໍາສັບ

1. **ວິສາຫະກິດບໍລິການຈັດຫາງານ** ໝາຍເຖິງ ການຈັດຕັ້ງທຸລະກິດໜຶ່ງ ມີຖານະເປັນນິຕິບຸກຄົນ ທີ່ໄດ້ຮັບການອະນຸມັດໃຫ້ເຄື່ອນໄຫວທຸລະກິດບໍລິການຈັດຫາງານຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. **ການອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ** ໝາຍເຖິງ ການຄົ້ນຄວ້າ, ກວດກາຄວາມຖືກຕ້ອງດ້ານເອກະສານ ແລະ ອະນຸມັດໃຫ້ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນພົນລະເມືອງລາວ ດໍາເນີນທຸລະກິດບໍລິການຈັດຫາງານຢູ່ພາຍໃນ ແລະ ຈັດສົ່ງໄປຕ່າງປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. **ການບໍລິການຈັດຫາງານ** ໝາຍເຖິງ ການໃຫ້ຄໍາປຶກສາ, ຄໍາແນະນໍາດ້ານຂໍ້ມູນ, ນິຕິກໍາ ແລະ ການສ້າງເງື່ອນໄຂອໍານວຍຄວາມສະດວກແກ່ຜູ້ຊອກຫາວຽກເຮັດ ແລະ ຜູ້ໃຊ້ແຮງງານທີ່ຕ້ອງການແຮງງານ ໂດຍນໍາໃຊ້ຕາໜ່າງຈັດຫາງານຂອງລັດ ແລະ ວິສາຫະກິດບໍລິການຈັດຫາງານ;
4. **ການບໍລິການຈັດຫາງານພາຍໃນປະເທດ** ໝາຍເຖິງ ການໃຫ້ຄໍາປຶກສາ ແລະ ຄໍາແນະນໍາດ້ານຂໍ້ມູນ, ນິຕິກໍາ ແລະ ການສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ຜູ້ຊອກຫາວຽກເຮັດງານທໍາ ຜູ້ໃຊ້ແຮງງານທີ່ຕ້ອງການແຮງງານຢູ່ພາຍໃນປະເທດ ໂດຍການບໍລິການຂອງຕາໜ່າງບໍລິການຈັດຫາງານຂອງລັດ ແລະ ວິສາຫະກິດບໍລິການຈັດຫາງານ;
5. **ການບໍລິການຈັດຫາງານໄປຕ່າງປະເທດ** ໝາຍເຖິງ ການຈັດສົ່ງແຮງງານລາວໄປເຮັດວຽກ, ຝຶກງານ, ຝຶກໃນໜ້າວຽກ ເພື່ອເຮັດໃຫ້ແຮງງານດັ່ງກ່າວໄດ້ຮຽນຮູ້, ຖອດຖອນບົດຮຽນ, ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານເຕັກນິກ, ພັດທະນາສີມືແຮງງານ ແລະ ສ້າງທັດສະນະຄະຕິ ກ່ຽວກັບການເຮັດວຽກແບບອຸດສາຫະກໍາ ຢູ່ຕ່າງປະເທດ ທີ່ ສປປ ລາວໄດ້ມີບົດບັນທຶກຄວາມເຂົ້າໃຈດ້ານການຈ້າງແຮງງານຮ່ວມກັນ ໂດຍການບໍລິການຂອງຕາໜ່າງບໍລິການຈັດຫາງານຂອງລັດ ທີ່ໄດ້ຮັບມອບໝາຍ ແລະ ວິສາຫະກິດບໍລິການຈັດຫາງານ;
6. **ຕະຫຼາດແຮງງານ** ໝາຍເຖິງ ແຫຼ່ງຄວາມຕ້ອງການ ແລະ ການສະໜອງແຮງງານ ຢູ່ໃນລະບົບເສດຖະກິດທັງພາຍໃນ ແລະ ຕ່າງປະເທດ;
7. **ຄວາມຕ້ອງການແຮງງານ** ໝາຍເຖິງ ຂໍ້ມູນກ່ຽວກັບຕໍາແໜ່ງງານວ່າງ ທີ່ຫົວໜ່ວຍແຮງງານຕ້ອງການບັນຈຸຜູ້ຊອກຫາວຽກເຮັດງານທໍາ ໂດຍກໍານົດເງື່ອນໄຂການເຮັດວຽກ, ເງິນເດືອນ ຫລື ຄ່າແຮງງານ, ຜົນປະໂຫຍດ ແລະນະໂຍບາຍອື່ນໆ ຢ່າງລະອຽດ;
8. **ການສະໜອງແຮງງານ** ໝາຍເຖິງ ການສະໜອງຈໍານວນຜູ້ອອກແຮງງານທີ່ພ້ອມຈະເຮັດວຽກ ຫຼື ເຂົ້າສູ່ຕະຫຼາດແຮງງານຕາມບັນຊີ ຫຼື ຂໍ້ມູນທີໄດ້ຂຶ້ນທະບຽນ ແລະ ຈັດແຍກຕາມປະເພດຜູ້ມີສີມື ແລະ ຜູ້ທີ່ບໍ່ມີສີມື ເຂົ້າເຮັດວຽກຕາມຕໍາແໜ່ງງານວ່າງ ທີ່ເໝາະສົມ;
9. **ຂັ້ນຕອນການຈັດຫາງານ** ໝາຍເຖິງ ການຮັບສະໝັກງານ, ການປະກອບເອກະສານ, ແຈ້ງລາຍຊື່, ຝຶກອົບຮົມ, ການສົ່ງເຂົ້າເຮັດວຽກ, ການຕິດຕາມຄຸ້ມຄອງ ແລະ ສົ່ງກັບຄືນພູມລໍາເນົາເດີມ ເວລາສິ້ນສຸດສັນຍານໍາໃຊ້ແຮງງານ.

ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງວິສາຫະກິດບໍລິການຈັດຫາງານ

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນຄົນລາວ ສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດບໍລິການຈັດຫາງານ ດ້ວຍການກໍານົດນະໂຍບາຍ, ສະໜອງຂໍ້ມູນ ຂ່າວສານ ແລະ ສ້າງເງື່ອນໄຂທີ່ຈໍາເປັນເພື່ອບໍລິການຈັດຫາງານໃຫ້ຜູ້ອອກແຮງງານໄດ້ມີວຽກເຮັດງານທໍາ ຕາມຄວາມຕ້ອງການຂອງຕະຫຼາດແຮງງານ ໃຫ້ສາມາດປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ;

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທຸກພາກສ່ວນ ປະກອບສ່ວນ, ອໍານວຍຄວາມສະດວກ, ຕິດຕາມ ແລະ ຄຸ້ມຄອງການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງວິສາຫະກິດບໍລິການຈັດຫາງານ**

ການອະນຸຍາດສ້າງຕັ້ງ ແລະ ຄຸ້ມຄອງວິສາຫະກິດບໍລິການຈັດຫາງານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ;
2. ສ້າງຕັ້ງ ແລະ ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ມີຄວາມເປັນເຈົ້າຕົນເອງທາງດ້ານການເງິນ ແລະ ການເຄື່ອນໄຫວຕາມກົດໝາຍ ແລະ ລະບຽບການ;
4. ຮັບປະກັນຜົນປະໂຫຍດຂອງລັດ, ຜູ້ອອກແຮງງານ, ຜູ້ໃຊ້ແຮງງານ ແລະ ວິສາຫະກິດບໍລິການຈັດຫາງານ;
5. ຮັບປະກັນ ປະສິດທິພາບ, ສະເໝີພາບ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;
6. ຮັບປະກັນທາງດ້ານປະສິດທິພາບຂອງການບໍລິການຈັດຫາງານ ໂດຍການຕິດຕາມ, ກວດກາ ແລະ ປະເມີນຜົນການເຄື່ອນໄຫວວຽກງານບໍລິການຈັດຫາງານ;
7. ຮັບປະກັນທາງດ້ານສິດທິໃນການອອກແຮງງານ ແລະ ສິດສະເໝີພາບຍິງ-ຊາຍ.

**ມາດຕາ 6 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກ່ຽວກັບການດໍາເນີນທຸລະກິດບໍລິການຈັດຫາງານໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ການຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ

**ມາດຕາ 7 ການຂໍອະນຸຍາດ ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນພົນລະເມືອງລາວ ທີ່ມີຈຸດປະສົງຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ຕ້ອງສະເໜີຂໍອະນຸມັດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍຜ່ານຫ້ອງການບໍລິການການລົງທຶນປະຕູດຽວ, ກະຊວງແຜນການ ແລະ ການລົງທຶນ ເພື່ອເຄື່ອນໄຫວວຽກງານບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ.

**ມາດຕາ 8 ຂັ້ນຕອນການສະເໜີຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ**

ຂັ້ນຕອນຂອງການສະເໜີຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ມີດັ່ງນີ້:

1. ຜູ້ທີ່ມີຈຸດປະສົງ ຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ຕ້ອງປະກອບເອກະສານກ່ຽວຂ້ອງ ທີ່ຫ້ອງການລົງທຶນປະຕູດຽວຂັ້ນສູນກາງ/ຂັ້ນທ້ອງຖິ່ນ ໂດຍການຢັ້ງຢືນຜ່ານພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງ ບ່ອນທີ່ສໍານັກງານວິສາຫະກິດບໍລິການຈັດຫາງານຕັ້ງຢູ່ ເພື່ອຂໍໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ;

2. ຫ້ອງການບໍລິການລົງທຶນປະຕູດຽວຂັ້ນສູນກາງ ໄດ້ຮັບເອກະສານຄົບຖ້ວນແລ້ວ ໃຫ້ສະເໜີຕໍ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນແຈ້ງຕອບຄືນຢ່າງເປັນລາຍລັກອັກສອນ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສົ່ງເສີມການລົງທຶນ;
3. ພາຍຫຼັງໄດ້ຮັບອະນຸຍາດການລົງທຶນຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ໃບທະບຽນວິສາຫະກິດ ຈາກຂະແໜງອຸດສາຫະກຳ ແລະ ການຄ້າ ແລ້ວ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ.

**ມາດຕາ 9 ຮູບແບບວິສາຫະກິດບໍລິການຈັດຫາງານ**

ຮູບແບບວິສາຫະກິດບໍລິການຈັດຫາງານ ແມ່ນໃຫ້ກຳນົດເປັນ ບໍລິສັດຈຳກັດ ຫຼື ບໍລິສັດຈຳກັດຜູ້ດຽວ ຕາມທີ່ກຳນົດໄວ້ໃນພາກທີ 2, ໝວດທີ 1, ມາດຕາ 12 ຂອງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013.

**ມາດຕາ 10 ເງື່ອນໄຂຂອງການຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ຕ້ອງມີເງື່ອນໄຂ ດັ່ງນີ້:

- ເປັນຄົນສັນຊາດລາວ;
- ມີອາຍຸ 25 ປີຂຶ້ນໄປ;
- ມີລະດັບການສຶກສາຈົບວິຊາສະເພາະໃດໜຶ່ງ ລະດັບຊັ້ນສູງຂຶ້ນໄປ;
- ມີສຸຂະພາບແຂງແຮງ;
- ມີຊີວະປະຫວັດແຈ້ງຂາວ ໂດຍບໍ່ມີໂທດ ແລະ ຄະດີມາກ່ອນ;
- ມີທຶນຈົດທະບຽນຂໍອະນຸຍາດເຄື່ອນໄຫວ ແລະ ມີເງິນສົດຄ້ຳປະກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
- ຕ້ອງຍື່ນເອກະສານຂໍອະນຸຍາດດ້ວຍຕົນເອງ;
- ບໍ່ຢູ່ໃນໄລຍະລົ້ມລະລາຍດ້ານທຸລະກິດ;
- ມີປະສົບການດ້ານການດຳເນີນທຸລະກິດໃດໜຶ່ງມາກ່ອນ ແລະ ຕ້ອງມີວິຊາການສົມຄູ່ກັບການດຳເນີນທຸລະກິດ;
- ມີຂໍ້ມູນຄວາມຕ້ອງການແຮງງານທີ່ລະອຽດ ແລະ ແຜນການການດຳເນີນການຈັດສົ່ງ;
- ສຳລັບນິຕິບຸກຄົນທີ່ໄດ້ຮັບອະນຸຍາດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມໃຫ້ເຮັດທົດລອງການຈັດຫາງານຢ່າງມີປະສິດທິຜົນ ຈະໄດ້ຮັບພິຈາລະນາເປັນບູລິມະສິດພິເສດ.

**ມາດຕາ 11 ມາດຕະຖານຂອງວິສາຫະກິດການຈັດຫາງານ**

ວິສາຫະກິດບໍລິການຈັດຫາງານຕ້ອງມີມາດຕະຖານ ດັ່ງນີ້:

1. ມີສຳນັກງານທີ່ປະກອບດ້ວຍຫ້ອງເຮັດວຽກ ຄື:
   - ຫ້ອງຮັບຕ້ອນລໍຖ້າສຳພາດ ແລະ ຂຶ້ນທະບຽນ;
   - ຫ້ອງສະໜອງຂໍ້ມູນຂ່າວສານຕະຫຼາດແຮງງານ ແລະ ໃຫ້ຄຳແນະນຳ;

- ຫ້ອງຝຶກອົບຮົມ ຫຼື ໃຫ້ຂໍ້ມູນກ່ອນການຈັດສົ່ງ;
- ຫ້ອງເຮັດວຽກຂອງຄະນະອຳນວຍການ ແລະ ພະນັກງານ;
- ຫ້ອງເກັບມ້ຽນເອກະສານ ແລະ ຂໍ້ມູນຢ່າງເປັນລະບົບ.

2. ບຸກຄະລາກອນຕ້ອງມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ໃນການບໍລິຫານວຽກງານ ແລະ ການຈັດຫາງານ ຢ່າງຖືກຕ້ອງ.
3. ມີກົນໄກ ເພື່ອການຈັດຫາງານ ເປັນຕົ້ນ:
   - ໃບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ;
   - ພາລະບົດບາດການເຄື່ອນໄຫວ ແລະ ລະບຽບພາຍໃນຂອງວິສາຫະກິດບໍລິການຈັດຫາງານ;
   - ເງິນທຶນໃນການດຳເນີນທຸລະກິດ;
   - ມີລະບົບການເກັບກຳຂໍ້ມູນ, ຕິດຕາມ ແລະ ຄຸ້ມຄອງ ແຮງງານທີ່ຈັດສົ່ງ ທັງພາຍໃນ ແລະ ໄປຕ່າງປະເທດ;
   - ມີຄູ່ມື ການຈັດຫາງານ, ແບບຟອມ ແລະ ຮ່າງສັນຍາຕ່າງໆ;
   - ມີຄູ່ມື ເພື່ອເຜີຍແຜ່ໂຄສະນາການຈັດຫາງານແບບຖືກຕ້ອງ;
   - ພາຫະນະ, ເຄື່ອງມື ແລະ ອຸປະກອນການເຮັດວຽກອື່ນໆ.
4. ມີສູນຝຶກສີມືແຮງງານ ເພື່ອສະໜອງຜູ້ອອກແຮງງານທີ່ຈະເຂົ້າສູ່ຕະຫຼາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ. ຖ້າວິສາຫະກິດບໍລິການຈັດຫາງານ ຍັງບໍ່ມີສູນຝຶກສີມືແຮງງານ ຕ້ອງເຊັນສັນຍາຮ່ວມກັບສູນຝຶກສີມືແຮງງານທີ່ໄດ້ມາດຖານ ເພື່ອສາມາດດຳເນີນການຝຶກສີມືແຮງງານດ້ານຕ່າງໆ ບົນພື້ນຄວາມຕ້ອງການຂອງຕຳແໜ່ງງານ.
5. ກໍລະນີ ທີ່ມີການນຳເອົາແຮງງານຈາກແຂວງອື່ນ ເພື່ອໄປເຮັດວຽກຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ.

**ມາດຕາ 12 ເອກະສານປະກອບຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ**

ເອກະສານປະກອບເພື່ອຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ມີດັ່ງນີ້:

- ໃບຄຳຮ້ອງຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ;
- ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບການເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ຕາມຮ່າງທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ກຳນົດ;
- ສຳເນົາໃບອະນຸຍາດລົງທຶນ ຈາກກະຊວງແຜນການ ແລະ ການລົງທຶນ;
- ໜັງສືສະເໜີຂໍອະນຸຍາດເຄື່ອນໄຫວ ໂດຍຜ່ານການຢັ້ງຢືນຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ;
- ຮ່າງກົດລະບຽບພາຍໃນຂອງວິສາຫະກິດບໍລິການຈັດຫາງານ;
- ສຳເນົາບັດປະຈຳຕົວຂອງຜູ້ສະເໜີເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ;
- ຊີວະປະຫວັດຫຍໍ້ຂອງຜູ້ສະເໜີເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ;
- ໃບຢັ້ງຢືນການສຶກສາຂອງຜູ້ສະເໜີເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ;
- ໃບແຈ້ງໂທດຂອງຜູ້ສະເໜີເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ;
- ສຳເນົາໃບຢັ້ງຢືນຊັບສິນ (ໃບຕາດິນ, ເຈົ້າຂອງອາຄານ, ບັນຊີເງິນຝາກ);
- ແຜນວາດທີ່ຕັ້ງຂອງວິສາຫະກິດບໍລິການຈັດຫາງານ (ຢັ້ງຢືນຈາກອຳນາດການປົກຄອງບ້ານ);
- ສຳເນົາໃບຢັ້ງຢືນຖານະທາງດ້ານການເງິນ (ອອກຊື່ຜູ້ທີ່ຈະເປັນເຈົ້າຂອງວິສາຫະກິດ);

- ສຳເນົາໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວວຽກງານຝຶກສີມືແຮງງານ (ຖ້າມີ);
- ສຳເນົາສັນຍາຮ່ວມມືກັບສູນຝຶກສີມືແຮງງານ ຖ້າຍັງບໍ່ທັນສ້າງຕັ້ງສູນຝຶກສີມືແຮງງານ;
- ໂຄງຮ່າງການຈັດຕັ້ງ ຫລື ສະພາບໍລິຫານຂອງວິສາຫະກິດບໍລິການຈັດຫາງານ;
- ຮູບພື້ນສີຟ້າ 3X4 ຈຳນວນ 2 ໃບ.

## ມາດຕາ 13 ທຶນຈົດທະບຽນ

ທຶນຈົດທະບຽນສຳລັບການອະນຸຍາດໃຫ້ເຄື່ອນໄຫວ ວິສາຫະກິດບໍລິການຈັດຫາງານ ຕ້ອງມີດັ່ງນີ້:

1. ທຶນຈົດທະບຽນ ສຳລັບການອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານພາຍໃນປະເທດ ບໍ່ຫຼຸດ 200.000.000 ກີບ (ສອງຮ້ອຍລ້ານ).
2. ທຶນຈົດທະບຽນ ສຳລັບການອະນຸຍາດໃຫ້ເຄື່ອນໄຫວການບໍລິການຈັດຫາງານພາຍໃນປະເທດ ແລະ ຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ ບໍ່ຫຼຸດ 2.000.000.000 ກີບ (ສອງຕື້ກີບ).

## ມາດຕາ 14 ເງິນຄ້ຳປະກັນ

ເງິນຄ້ຳປະກັນ ແມ່ນເງິນທີ່ວິສາຫະກິດບໍລິການຈັດຫາງານທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວການບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ ຖອກເຂົ້າກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອແຮໄວ້ໃຊ້ຈ່າຍໃນກໍລະນີສຸກເສີນຕ່າງໆ ກ່ຽວກັບການເຄື່ອນໄຫວວຽກງານບໍລິການຈັດຫາງານ.

ສຳລັບເງິນຄ້ຳປະກັນເຄື່ອນໄຫວວິສາຫະກິດບໍລິການຈັດຫາງານພາຍໃນປະເທດ ຖອກເປັນເງິນກີບເທົ່າກັບ 2.000 ໂດລາສະຫະລັດ ແລະ ວິສາຫະກິດບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງໄປຕ່າງປະເທດ ຖອກເປັນເງິນກີບ ເທົ່າກັບ 20.000 ໂດລາສະຫະລັດ ໂດຍພົວພັນກັບພະແນກການເງິນຂອງຫ້ອງການກະຊວງແຮງງານ ແລະ ສະຫວັດດີການສັງຄົມເພື່ອດຳເນີນຂັ້ນຕອນການຖອກເງິນຄ້ຳປະກັນ ແລະ ອອກໃບຢັ້ງຢືນ.

ເງິນຄ້ຳປະກັນແມ່ນຈະຖືກສົ່ງຄືນໃຫ້ວິສາຫະກິດບໍລິການຈັດຫາງານ ຖ້າຫາກບໍ່ໄດ້ນຳໃຊ້ ຫຼື ຖືກນຳໃຊ້ບາງສ່ວນ ພາຍຫຼັງທີ່ອະນຸມັດຂໍ້ຕົກລົງຍຸບເລີກການເຄື່ອນໄຫວ ແລະ ວິສາຫະກິດບໍລິການຈັດຫາງານໄດ້ຕິດຕາມ ແລະ ຄຸ້ມຄອງຜູ້ອອກແຮງງານທີ່ຖືກຈັດສົ່ງ ຄົບຕາມສັນຍາແຮງງານ.

## ມາດຕາ 15 ໄລຍະເວລາຄົ້ນຄວ້າ ແລະ ອອກໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ

ການຄົ້ນຄ້ວາ ແລະ ພິຈາລະນາ ອອກໃບອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງໄປຕ່າງປະເທດບໍ່ໃຫ້ເກີນ ຊາວຫ້າ (25) ວັນລັດຖະການ ນັບແຕ່ມື້ໄດ້ຮັບໃບອະນຸຍາດລົງທຶນຈາກຫ້ອງການບໍລິການລົງທຶນປະຕູດຽວ, ກະຊວງແຜນການ ແລະ ການລົງທຶນ ບໍ່ນັບມື້ຍື່ນຄຳຮ້ອງຜ່ານພະແນກ ແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ, ຜ່ານເອກະສານຢູ່ຫ້ອງການບໍລິການລົງທຶນປະຕູດຽວ ແລະ ໄລຍະເວລາດັດແກ້ ໃນເວລາເອກະສານບໍ່ຖືກຕ້ອງ.

## ມາດຕາ 16 ກຳນົດເວລາຂອງໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ

ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານມີກຳນົດ 3 ປີ ແລະ ສາມາດຂໍຕໍ່ໄດ້ຄັ້ງລະ 3 ປີ ໂດຍຍື່ນຊຸດເອກະສານຂໍຕໍ່ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານນຳກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກ່ອນໃບອະນຸຍາດ ຈະໝົດອາຍຸ 45 ວັນ.

ມາດຕາ 17 ເງື່ອນໄຂຂອງການຂໍຕໍ່ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ

ເງື່ອນໄຂໃນການຂໍຕໍ່ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ມີດັ່ງນີ້:

- ສາມາດປະຕິບັດຕົວເລກຄາດໝາຍຈັດຫາງານພາຍໃນປະເທດ ຕາມການມອບໝາຍ;
- ໄດ້ຕິດຕາມ, ຄຸ້ມຄອງ ເພື່ອປົກປ້ອງສິດທິ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ທີ່ຢູ່ພາຍໃຕ້ການຈັດສົ່ງຂອງ ຕົນ ໃຫ້ມີຄວາມປອດໄພ ແລະ ຮັບຜິດຊອບນຳສົ່ງຜູ້ອອກແຮງງານກັບຄືນຖິ່ນຖານເດີມ ເມື່ອສິ້ນສຸດສັນຍາ;
- ໄດ້ຮີບຮ້ອນແກ້ໄຂ ແລະ ລາຍງານໃຫ້ອົງການຄຸ້ມຄອງວຽກງານແຮງງານ ຊາບໂດຍໄວໃນກໍລະນີມີຂໍ້ຂັດແຍ່ງແຮງງານ ຫຼື ເກີດເຫດການໃດໜຶ່ງກັບຜູ້ອອກແຮງງານ;
- ບໍ່ເກັບຄ່າບໍລິການນຳຜູ້ອອກແຮງງານ ນອກຈາກທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ບໍ່ເກັບເງິນຄ່າມັດຈຳ ຫຼື ໃຫ້ນຳເອົາວັດຖຸສິ່ງຂອງ ທີ່ມີຄ່າມັດຈຳ ເພື່ອຈັດສົ່ງໄປເຮັດວຽກຢູ່ພາຍໃນ ແລະ ຕ່າງປະເທດ ນຳຜູ້ອອກແຮງງານ;
- ບໍ່ສ້າງສັນຍາ ທີ່ມີລັກສະນະບັງຄັບຜູ້ອອກແຮງງານ;
- ຜູ້ອອກແຮງງານທີ່ຖືກຈັດສົ່ງໄປເຮັດວຽກ ບໍ່ໄດ້ຖືກກົດຂີ່ຂູດຮີດແຮງງານ ຫຼື ຕົກເປັນເຫຍື່ອຂອງການຄ້າມະນຸດ;
- ປະຕິບັດພັນທະໃຫ້ລັດ ຢ່າງຖືກຕ້ອງ ແລະ ຄົບຖ້ວນ;
- ມີການສະຫຼຸບລາຍງານຂໍ້ມູນການຈັດຫາງານ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຢ່າງເປັນປົກກະຕິ;
- ປະຕິບັດລະບຽບ, ກົດໝາຍ ຂອງລັດວາງອອກຢ່າງຖືກຕ້ອງ.

ມາດຕາ 18 ເອກະສານປະກອບຂໍຕໍ່ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ

ເອກະສານ ປະກອບຂໍຕໍ່ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ມີດັ່ງນີ້:

- ໃບຄຳຮ້ອງຂໍຕໍ່ໃບອະນຸຍາດ;
- ບົດລາຍງານການເຄື່ອນໄຫວໃນໄລຍະ 3 ປີ ຜ່ານມາ;
- ສຳເນົາໃບເສຍອາກອນລາຍໄດ້;
- ສຳເນົາໃບອະນຸຍາດສະບັບເກົ່າ;
- ສຳເນົາລະບຽບພາຍໃນຂອງວິສາຫະກິດບໍລິການຈັດຫາງານ ທີ່ຮັບຮອງໂດຍອົງການຄຸ້ມຄອງແຮງງານ;
- ໃບແຈ້ງໂທດ;
- ສັງລວມຄຳຮ້ອງຟ້ອງຂອງຜູ້ອອກແຮງງານທີ່ຖືກຈັດສົ່ງ;
- ຮູບ 3X4 ສອງໃບ.

## ໝວດທີ 3
## ການຂໍອະນຸຍາດທົດລອງເຄື່ອນໄຫວການບໍລິການຈັດຫາງານ

ມາດຕາ 19 ການຂໍອະນຸຍາດທົດລອງເຄື່ອນໄຫວການບໍລິການຈັດຫາງານ

ນິຕິບຸກຄົນ ທີ່ເປັນພົນລະເມືອງລາວ ທີ່ມີຈຸດປະສົງຂໍອະນຸຍາດທົດລອງການບໍລິການຈັດຫາງານໃຫ້ພົນລະເມືອງລາວ ເພື່ອເຮັດວຽກຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງສະເໜີຂໍອະນຸມັດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເທົ່ານັ້ນ.

**ມາດຕາ 20 ເງື່ອນໄຂຂອງນິຕິບຸກຄົນຂໍອະນຸຍາດທົດລອງເຄື່ອນໄຫວການບໍລິການຈັດຫາງານ**

ນິຕິບຸກຄົນ ທີ່ຂໍອະນຸຍາດທົດລອງເຄື່ອນໄຫວການບໍລິການຈັດຫາງານ ຕ້ອງມີເງື່ອນໄຂ ດັ່ງນີ້:

- ນິຕິບຸກຄົນທີ່ຄົນລາວເປັນເຈົ້າຂອງ;
- ເປັນນິຕິບຸກຄົນທີ່ໄດ້ຮັບຄວາມເຊື່ອຖື;
- ຕ້ອງມີຂໍ້ມູນຄວາມຕ້ອງການແຮງງານທີ່ລະອຽດ ແລະ ແຜນການສະໜອງແຮງງານຢ່າງຈະແຈ້ງ;
- ຕ້ອງມີບຸກຄະລາກອນທີ່ມີຄວາມຮູ້ ຫຼື ປະສົບການກ່ຽວກັບວຽກງານການຈັດຫາງານ.

**ມາດຕາ 21 ເອກະສານປະກອບຂໍອະນຸຍາດທົດລອງເຄື່ອນໄຫວການບໍລິການຈັດຫາງານ**

ເອກະສານປະກອບຂໍອະນຸຍາດທົດລອງເຄື່ອນໄຫວການບໍລິການຈັດຫາງານ ມີດັ່ງນີ້:

- ໃບຄໍາຮ້ອງຂໍອະນຸຍາດທົດລອງເຄື່ອນໄຫວການບໍລິການຈັດຫາງານ;
- ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບການທົດລອງເຄື່ອນໄຫວການບໍລິການຈັດຫາງານ;
- ໃບແຈ້ງໂທດຂອງຜູ້ສະເໜີທົດລອງເຄື່ອນໄຫວການບໍລິການຈັດຫາງານ;
- ສໍາເນົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນເສຍອາກອນ;
- ໃບຢັ້ງຢືນຖານະການເງິນ.

**ມາດຕາ 22 ໄລຍະເວລາ ອະນຸຍາດທົດລອງເຄື່ອນໄຫວການບໍລິການຈັດຫາງານ**

ການອະນຸຍາດທົດລອງການເຄື່ອນໄຫວການບໍລິການຈັດຫາງານ ໃຫ້ນິຕິບຸກຄົນ ແມ່ນກໍານົດເວລາ 1 ປີ ແລະ ສາມາດສະເໜີສືບຕໍ່ການທົດລອງອອກໄປໄດ້ຕື່ມອີກຄັ້ງລະ 1 ປີ ລວມທັງໝົດບໍ່ເກີນ 3 ປີ ໂດຍຜ່ານການປະເມີນຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອພິຈາລະນາ ອະນຸຍາດໃຫ້ສືບຕໍ່ໃນແຕ່ລະຄັ້ງ.

## ໝວດທີ 4
## ສິດ ແລະ ໜ້າທີ່ໃນການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ

**ມາດຕາ 23 ໜ້າທີ່ຂອງວິສາຫະກິດບໍລິການຈັດຫາງານ**

ວິສາຫະກິດບໍລິການຈັດຫາງານ ມີໜ້າທີ່ ດັ່ງນີ້:

- ແຈ້ງສະຖານທີ່ຕັ້ງ, ຕິດປ້າຍວິສາຫະກິດ ແລະ ແຈ້ງບັນຊີລາຍຊື່ ພ້ອມປະຫວັດຂອງພະນັກງານທີ່ເຮັດວຽກນໍາຕົນ ລວມທັງພະນັກງານສາຂາໃຫ້ອົງການຄຸ້ມຄອງວຽກງານແຮງງານ ຊາບ;
- ສະເໜີຕໍ່ອົງການຄຸ້ມຄອງວຽກງານແຮງງານຂັ້ນສູນກາງ ເພື່ອອອກບັດປະຈໍາຕົວພະນັກງານຈັດຫາງານທຸກຄົນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ເພື່ອສະດວກໃນການເຄື່ອນໄຫວລະດົມເອົາແຮງງານ ແລະ ປະສານງານກັບທ້ອງຖິ່ນ, ພາຍຫຼັງສິ້ນສຸດການເປັນພະນັກງານຂອງວິສາຫະກິດບໍລິການຈັດຫາງານແລ້ວໃຫ້ສົ່ງບັດຄືນ;

- ຄົ້ນຄ້ວາ, ປະສານງານ ແລະ ຊອກຮູ້ ຄວາມຕ້ອງການຂອງຕະຫຼາດແຮງງານຢູ່ພາຍໃນປະເທດ ແລະ ຕ່າງປະເທດ, ເຮັດສັນຍາສະໜອງແຮງງານກັບຫົວໜ່ວຍແຮງງານ, ເພື່ອສະໜອງແຮງງານລາວ ຕາມຄວາມຕ້ອງການຂອງຕະຫຼາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ;

- ເປັນເຈົ້າການໃນການສ້າງສັນຍາສະໜອງແຮງງານກັບຜູ້ນໍາໃຊ້ແຮງງານ ຫຼື ຕົວແທນຜູ້ນໍາໃຊ້ແຮງງານ, ສັນຍາຜູກພັນກັບຜູ້ອອກແຮງງານ ແລະ ສັນຍາແຮງງານ ລະຫວ່າງ ຜູ້ອອກແຮງງານ ແລະ ຜູ້ນໍາໃຊ້ແຮງງານ;

- ຕິດຕາມ, ຄຸ້ມຄອງ ເພື່ອປົກປ້ອງສິດທິ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ທີ່ມາໃຊ້ການບໍລິການຢູ່ວິສາຫະກິດຂອງຕົນ ໃຫ້ມີຄວາມປອດໄພ ແລະ ຮັບຜິດຊອບນໍາສົ່ງຜູ້ອອກແຮງງານກັບຄືນຖິ່ນຖານເດີມເມື່ອສິ້ນສຸດສັນຍາ. ໃນກໍລະນີມີຂໍ້ຂັດແຍ່ງແຮງງານ ຫຼື ເກີດເຫດການໃດໜຶ່ງກັບຜູ້ອອກແຮງງານ ຕ້ອງຮີບຮ້ອນແກ້ໄຂ ແລະ ລາຍງານໃຫ້ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຊາບໂດຍໄວ;

- ຕິດຕາມສະພາບຂອງຜູ້ອອກແຮງງານ ໂດຍຮັບປະກັນບໍ່ໃຫ້ຜູ້ໃຊ້ແຮງງານເກັບເງິນ ຄ່າບໍລິການຄືນນໍາຜູ້ອອກແຮງງານ;

- ເກັບກໍາຈໍານວນຜູ້ອອກແຮງງານທີ່ຖືກຈັດສົ່ງ, ສິ້ນສຸດສັນຍາ ແລ້ວກັບຄືນປະເທດ, ສິ້ນສຸດສັນຍາ ແລ້ວຕໍ່ສັນຍາ, ຍົກເລີກສັນຍາ, ໂຕນໜີ ແລະ ປ່ຽນຜູ້ນໍາໃຊ້ແຮງງານ;

- ຊອກຫາວຽກເຮັດງານທໍາພາຍໃນປະເທດ ໃຫ້ຜູ້ອອກແຮງງານທີ່ກັບຈາກຕ່າງປະເທດ ໃຫ້ສອດຄ່ອງກັບສີມືແຮງງານ ແລະ ຄວາມສາມາດທີ່ໄດ້ຮັບຈາກຕ່າງປະເທດ;

- ເຜີຍແຜ່, ແນະນໍາ, ໃຫ້ຄໍາປຶກສາແກ່ຜູ້ອອກແຮງງານທີ່ມາສະໝັກງານນໍາຕົນ ໃຫ້ເຂົ້າໃຈເຖິງລະບົບຈັດຫາງານ ແລະ ການເຮັດວຽກຢ່າງປອດໄພ, ມີລາຍໄດ້ ແລະ ຫຼຸດຜ່ອນຄວາມທຸກຍາກ ລວມທັງຂໍ້ມູນກ່ຽວກັບຄວາມສ່ຽງຂອງການຕົກເປັນເຫຍື່ອການຄ້າມະນຸດ;

- ແຈ້ງຄວາມກ່ຽວກັບການຄ້າມະນຸດໃຫ້ເຈົ້າໜ້າທີ່ຕໍາຫຼວດ ຕາມທີ່ກໍານົດໄວ້ໃນມາດຕາ 33 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ;

- ຮັບຜິດຊອບຄ່າໃຊ້ຈ່າຍໃນການຝຶກອົບຮົມກ່ອນການຈັດສົ່ງ, ອາຫານ, ຄ່າພັກເຊົາ, ຄ່າເອກະສານທີ່ກ່ຽວຂ້ອງ ແລະ ຄ່າເດີນທາງ ສໍາລັບການກະກຽມສົ່ງຜູ້ອອກແຮງງານເຂົ້າເຮັດວຽກ ຢູ່ພາຍໃນ ແລະ ຈັດສົ່ງໄປຕ່າງປະເທດ;

- ຈັດຝຶກອົບຮົມກ່ອນການຈັດສົ່ງຜູ້ອອກແຮງງານໄປເຮັດວຽກຢູ່ຕ່າງປະເທດ ຕາມຫຼັກສູດທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ສ້າງຂຶ້ນ;

- ຍົກລະດັບສີມືແຮງງານໃຫ້ຜູ້ອອກແຮງງານທີ່ມາຂຶ້ນທະບຽນ ເພື່ອກຽມສະໜອງໃຫ້ຕະຫຼາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ;

- ສະຫຼຸບລາຍງານຜົນການເຄື່ອນໄຫວ ແລະ ແຜນການດໍາເນີນທຸລະກິດ ປະຈໍາເດືອນ, ໄຕມາດ ແລະ ປະຈໍາປີ ໃຫ້ອົງການຄຸ້ມຄອງວຽກງານແຮງງານ ແລະ ຂະແໜງການທີ່ກ່ຽວຂ້ອງຊາບ ຢ່າງເປັນປົກກະຕິ;

- ປະຕິບັດພັນທະຕ່າງໆ ກ່ຽວກັບການດໍາເນີນທຸລະກິດຕາມລະບຽບກົດໝາຍຂອງລັດ ທີ່ໄດ້ກໍານົດໄວ້ຢ່າງຄົບຖ້ວນ ແລະ ທັນເວລາ;

- ກໍລະນີ ມີການສ້າງຕັ້ງສາຂາ, ຍົກຍ້າຍຫ້ອງການ, ປິດກິດຈະການ ຫຼື ປ່ຽນແປງຜູ້ບໍລິຫານ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງວຽກງານແຮງງານ ແລະ ຂະແໜງການທີ່ກ່ຽວຂ້ອງ ຊາບ;

- ນໍາພາພະນັກງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນເຂົ້າເປັນສະມາຊິກປະກັນສັງຄົມ ພາຍຫຼັງທີ່ໄດ້ຮັບການອະນຸຍາດສ້າງຕັ້ງ;

- ປະສານງານກັບຄູ່ຮ່ວມງານຢູ່ປະເທດປາຍທາງ ເພື່ອຕິດຕາມ, ເກັບກຳຂໍ້ມູນ ແລະ ໃຫ້ການຊ່ວຍເຫຼືອຜູ້ອອກແຮງງານ ທີ່ຮຽກຮ້ອງສິດທິ ແລະ ໃນກໍລະນີສຸກເສີນຕ່າງໆ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍດັ່ງກ່າວ;

- ປະສານສົມທົບກັບຫົວໜ່ວຍແຮງງານ ພາຍໃນປະເທດ ເພື່ອເກັບກຳຂໍ້ມູນຄວາມຕ້ອງການແຮງງານ ແລະ ສະໜອງຜູ້ອອກແຮງງານເຂົ້າໃສ່ຕຳແໜ່ງງານວ່າງທີ່ມີຢູ່;

- ຈັດຫາງານໃຫ້ຜູ້ວ່າງງານພາຍໃນ ແລະ ຜູ້ອອກແຮງງານທີ່ກັບຈາກຕ່າງປະເທດເປັນບູລິມະສິດຕົ້ນຕໍ;

- ສະເໜີສ້າງຕັ້ງສະມາຄົມວິສາຫະກິດບໍລິການຈັດຫາງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການບໍລິການຈັດຫາງານມີຄວາມເຂັ້ມແຂງ ແລະ ສາມາດຈັດຫາງານໃຫ້ພົນລະເມືອງລາວໄດ້ຫຼາຍຂຶ້ນ;

- ເຄື່ອນໄຫວຕາມພາລະບົດບາດ, ໜ້າທີ່ອື່ນ ຕາມການມອບໝາຍຂອງອົງການຄຸ້ມຄອງວຽກງານແຮງງານ.

## ມາດຕາ 24 ສິດ ຂອງວິສາຫະກິດບໍລິການຈັດຫາງານ

ວິສາຫະກິດບໍລິການຈັດຫາງານ ມີສິດ ດັ່ງນີ້:

- ເຄື່ອນໄຫວດຳເນີນທຸລະກິດບໍລິການຈັດຫາງານໃຫ້ຜູ້ອອກແຮງງານລາວ ຢູ່ພາຍໃນປະເທດ ຫຼື ຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ພາຍໃຕ້ການອະນຸຍາດ ແລະ ການຄຸ້ມຄອງ ຂອງອົງການຄຸ້ມຄອງວຽກງານແຮງງານ;

- ເກັບກຳຂໍ້ມູນຄວາມຕ້ອງການ ແລະ ການສະໜອງແຮງງານ ເພື່ອວາງແຜນການຈັດຫາງານ, ຝຶກ ແລະ ພັດທະນາສີມືແຮງງານ ຕາມຄວາມຕ້ອງການຂອງຕະຫຼາດແຮງງານ ຢູ່ພາຍໃນ ແລະ ຕ່າງປະເທດ;

- ຮັບສະໝັກງານ ຕາມຄວາມສາມາດ ແລະ ທ່າແຮງຂອງວິສາຫະກິດຂອງຕົນ ໂດຍໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານແຮງງານ;

- ເຂົ້າຮ່ວມປະຊຸມ, ປະກອບຄຳເຫັນ ແລະ ແລກປ່ຽນປະສົບການນຳວິສາຫະກິດບໍລິການຈັດຫາງານດ້ວຍກັນ ຫຼື ອົງການຂອງລັດ ຕາມຄຳເຊີນ;

- ເກັບຄ່າບໍລິການຈັດຫາງານ ນຳຜູ້ໃຊ້ແຮງງານ ຕາມອັດຕາທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

- ເຂົ້າຮ່ວມ ຫຼື ຈັດງານຕະຫຼາດນັດແຮງງານ ລະຫວ່າງ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ, ໃຫ້ຄຳແນະນຳ ແລະ ໃຫ້ຄຳປຶກສາແກ່ຜູ້ສະໝັກງານ, ພ້ອມທັງສ້າງຄວາມໝັ້ນໃຈໃຫ້ຜູ້ໃຊ້ແຮງງານ ໂດຍການອະທິບາຍລະບົບ, ຂັ້ນຕອນ, ຄຸນນະພາບຂອງແຮງງານທີ່ວິສາຫະກິດບໍລິການຈັດຫາງານ ຈະສົ່ງໃຫ້ຜູ້ໃຊ້ແຮງງານນຳໃຊ້;

- ດຳເນີນເອກະສານເພື່ອຂໍອະນຸຍາດໂກຕາ, ນຳເຂົ້າ, ອອກບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດເຂົ້າມາເຮັດວຽກຢູ່ ສປປ ລາວ ຕາມຄວາມສະໝັກໃຈ;

- ຊຸກຍູ້ ແລະ ສົ່ງເສີມການທົດສອບສີມືແຮງງານ ແລະ ການແຂ່ງຂັນສີມືແຮງງານຢູ່ພາຍໃນ ແລະ ຕ່າງປະເທດ.

- ເຂົ້າຮ່ວມສະມາຄົມວິສາຫະກິດຈັດຫາງານລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 25 ການເຄື່ອນໄຫວຮັບສະໝັກງານ

ການເຄື່ອນໄຫວຮັບສະໝັກງານຂອງວິສາຫະກິດບໍລິການຈັດຫາງານ ຕ້ອງປະຕິບັດ ດັ່ງນີ້:

1. ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວຮັບສະໝັກງານ ຈາກອົງການປົກຄອງຂັ້ນທ້ອງຖິ່ນ;

2. ເປັນພະນັກງານຂອງວິສາຫະກິດບໍລິການຈັດຫາງານ ແລະ ມີບັດປະຈຳຕົວພະນັກງານ ທີ່ອະນຸມັດໂດຍອົງການຄຸ້ມຄອງວຽກງານແຮງງານ;
3. ການໂຄສະນະຕຳແໜ່ງງານຕ້ອງຖືກຕ້ອງຕາມຄວາມຈິງ, ໂປ່ງໃສ ແລະ ກວດສອບໄດ້.

**ມາດຕາ 26 ເອກະສານປະກອບຂໍເຮັດບັດພະນັກງານ**

ເອກະສານປະກອບຂໍອອກບັດພະນັກງານ ປະກອບມີ:

- ໃບຄຳຮ້ອງຂອງວິສາຫະກິດບໍລິການຈັດຫາງານ;
- ສັນຍາແຮງງານ;
- ຊີວະປະຫວັດຫຍໍ້;
- ໃບແຈ້ງໂທດ;
- ຮູບ 2 x 2,5 ສອງໃບ.

**ມາດຕາ 27 ສາຂາຂອງວິສາຫະກິດບໍລິການຈັດຫາງານ**

ວິສາຫະກິດບໍລິການຈັດຫາງານ ທີ່ມີຈຸດປະສົງສ້າງຕັ້ງສາຂາຂອງຕົນຢູ່ແຂວງ ຫຼື ນະຄອນຫຼວງວຽງຈັນ ຕ້ອງສະເໜີເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຄົ້ນຄວ້າ ແລະ ພິຈາລະນາ ອະນຸມັດ. ພາຍຫຼັງໄດ້ຮັບອະນຸມັດແລ້ວ ຕ້ອງປະສານສົມທົບກັບເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ເພື່ອປະຕິບັດຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 28 ເອກະສານປະກອບຂໍສ້າງຕັ້ງສາຂາວິສາຫະກິດບໍລິການຈັດຫາງານ**

ເອກະສານປະກອບຂໍສ້າງຕັ້ງສາຂາວິສາຫະກິດບໍລິການຈັດຫາງານ ມີດັ່ງນີ້:

- ໃບຄຳຮ້ອງຂໍອະນຸຍາດສ້າງຕັ້ງສາຂາວິສາຫະກິດບໍລິການຈັດຫາງານພາຍໃນ ຫຼື ທັງຈັດຫາງານພາຍໃນປະເທດ ແລະ ຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ;
- ສຳເນົາໃບອະນຸຍາດສ້າງຕັ້ງວິສາຫະກິດບໍລິການຈັດຫາງານ;
- ໃບແຕ່ງຕັ້ງຫົວໜ້າສາຂາ;
- ຊີວະປະຫວັດຫຍໍ້ຂອງຫົວໜ້າສາຂາ;
- ໃບຢັ້ງຢືນການສຶກສາຂອງຫົວໜ້າສາຂາ;
- ໃບແຈ້ງໂທດຂອງຫົວໜ້າສາຂາ;
- ແຜນວາດທີ່ຕັ້ງຂອງສາຂາວິສາຫະກິດບໍລິການຈັດຫາງານ (ຢັ້ງຢືນຈາກອຳນາດການປົກຄອງບ້ານ);
- ໂຄງຮ່າງການຈັດຕັ້ງຂອງສາຂາ;
- ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 29 ການປ່ຽນຊື່ວິສາຫະກິດບໍລິການຈັດຫາງານ ຫຼື ເຈົ້າຂອງກິດຈະການ**

ການປ່ຽນຊື່ວິສາຫະກິດບໍລິການຈັດຫາງານ ຫຼື ເຈົ້າຂອງກິດຈະການ ຕ້ອງສະເໜີປ່ຽນໃບທະບຽນວິສາຫະກິດຢູ່ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ໃບອະນຸຍາດລົງທຶນຢູ່ຫ້ອງການບໍລິການລົງທຶນປະຕູດຽວ,

ກະຊວງແຜນການ ແລະ ການລົງທຶນ. ຫຼັງຈາກນັ້ນ ຈຶ່ງສະເໜີປ່ຽນໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ມາດຕາ 30 ການຍົກຍ້າຍທີ່ຕັ້ງຂອງວິສາຫະກິດບໍລິການຈັດຫາງານ**

ວິສາຫະກິດບໍລິການຈັດຫາງານທີ່ໄດ້ປ່ຽນແປງທີ່ຕັ້ງ ຈາກທີ່ກຳນົດໄວ້ໃນໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ຕ້ອງແຈ້ງໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມຊາບ ເພື່ອຈະປະສານ ແລະ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບ.

## ໝວດທີ 5
## ການໂຈະ, ຖອນ ຫຼື ຍຸບເລີກວິສາຫະກິດບໍລິການຈັດຫາງານ

**ມາດຕາ 31 ການໂຈະ, ຖອນ ຫຼື ຍຸບເລີກ**

ການໂຈະ, ຖອນ ຫຼື ຍຸບເລີກວິສາຫະກິດບໍລິການຈັດຫາງານ ແມ່ນການອະນຸມັດ ແລະ ຕົກລົງຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຢຸດການເຄື່ອນໄຫວການບໍລິການຈັດຫາງານ ຊົ່ວຄາວ ຫຼື ຖາວອນຕາມແຕ່ລະກໍລະນີ.

**ມາດຕາ 32 ເງື່ອນໄຂຂອງການໂຈະ, ຖອນ ຫຼື ຍຸບເລີກ**

ວິສາຫະກິດບໍລິການຈັດຫາງານ ທີ່ຖືກໂຈະ ຖອນ ຫຼື ຍຸບເລີກ ແມ່ນຕາມເງື່ອນໄຂ ດັ່ງນີ:

- ມີຄຳສັ່ງໃຫ້ໂຈະ ຫຼື ຖອນຈາກລັດຖະບານ ຫຼື ອົງການຄຸ້ມຄອງວຽກງານແຮງງານ;
- ມີການຮ້ອງຂໍໃຫ້ໂຈະ ຫຼື ຖອນຈາກເຈົ້າຂອງວິສາຫະກິດບໍລິການຈັດຫາງານເອງ;
- ມີການລົ້ມລະລາຍ ຕາມຄຳຕັດສິນຂອງສານ;
- ເຄື່ອນໄຫວຫຼຸດທຶນຢ່າງຕໍ່ເນື່ອງ ແລະ ບໍ່ສາມາດແກ້ໄຂໄດ້ ແຕ່ວິສາຫະກິດຕ້ອງຮັບປະກັນການສຳລະສະສາງຕາມກົດໝາຍ;
- ບໍ່ສາມາດປະຕິບັດໜ້າທີ່ຕາມທີ່ກຳນົດໄວ້ໃນມາດຕາ 21;
- ບໍ່ປະຕິບັດຕາມຂໍ້ຫ້າມ ທີ່ກຳນົດໄວ້ໃນມາດຕາ 34;
- ຖືກຮ້ອງຟ້ອງຈາກຜູ້ອອກແຮງງານຢ່າງຕໍ່ເນື່ອງ ຕາມການລາຍງານຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ;
- ຖືກດຳເນີນຄະດີ ແລະ ຖືກສານຕັດສິນຂໍ້ຫາການຄ້າມະນຸດ;
- ເຄື່ອນໄຫວວຽກງານການບໍລິການຈັດຫາງານບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 33 ຂັ້ນຕອນການໂຈະ, ຖອນ ຫຼື ຍຸບເລີກ**

ການໂຈະ, ຖອນ ຫຼື ຍຸບເລີກວິສາຫະກິດບໍລິການຈັດຫາງານ ແມ່ນໃຫ້ປະຕິບັດ ດັ່ງນີ້:

1. ອົງການຄຸ້ມຄອງວຽກງານແຮງງານ ປະເມີນການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ;
2. ວິສາຫະກິດບໍລິການຈັດຫາງານ ຕ້ອງແກ້ໄຂບັນຫາໜີ້ສິນ, ບັນຫາການເຮັດວຽກຂອງຜູ້ອອກແຮງງານພາຍໃຕ້ຄວາມຮັບຜິດຊອບຂອງຕົນ ແລະ ບັນຫາອື່ນທີ່ກ່ຽວຂ້ອງ;

3. ອົງການຄຸ້ມຄອງວຽກງານແຮງງານຂັ້ນສູນກາງ ອະນຸມັດໃຫ້ໂຈະ, ຖອນ ຫຼື ຍຸບເລີກວິສາຫະກິດບໍລິການຈັດຫາງານ.

**ມາດຕາ 34 ເອກະສານປະກອບຂໍໂຈະ, ຖອນ ຫຼື ຍຸບເລີກ**

ເອກະສານປະກອບ ເພື່ອສະເໜີຂໍອະນຸມັດໂຈະ, ຖອນ ຫຼື ຍຸບເລີກວິສາຫະກິດບໍລິການຈັດຫາງານ ປະກອບມີ ດັ່ງນີ້:

1. ໜັງສືສະເໜີຂອງວິສາຫະກິດບໍລິການຈັດຫາງານ ຫຼື ອົງການຄຸ້ມຄອງວຽກງານແຮງງານ ເພື່ອຂໍໂຈະ, ຖອນ ຫຼື ຍຸບເລີກວິສາຫະກິດບໍລິການຈັດຫາງານ;
2. ໃບປະເມີນການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ;
3. ບົດລາຍງານການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານໃນໄລຍະຜ່ານມາ;
4. ເອກະສານອື່ນ ທີ່ກ່ຽວຂ້ອງ.

## ໝວດທີ 6
## ຄ່າທໍານຽມ ແລະ ຄ່າບໍລິການ

**ມາດຕາ 35 ຄ່າທໍານຽມ**

ຄ່າທໍານຽມໃນການອອກໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ໃຫ້ປະຕິບັດ ດັ່ງນີ້:

- ອອກໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານພາຍໃນປະເທດ 500.000 ກີບຕໍ່ຄັ້ງ;
- ອອກໃບອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງໄປຕ່າງປະເທດ 1.000.000 ກີບຕໍ່ຄັ້ງ;
- ຕໍ່ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານພາຍໃນປະເທດ 250.000 ກີບຕໍ່ຄັ້ງ;
- ຕໍ່ໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານພາຍໃນ ແລະ ຈັດສົ່ງໄປຕ່າງປະເທດ 500.000 ກີບຕໍ່ຄັ້ງ.

**ມາດຕາ 36 ຄ່າບໍລິການຂອງວິສາຫະກິດບໍລິການຈັດຫາງານ**

ຄ່າບໍລິການຈັດຫາງານຂອງວິສາຫະກິດບໍລິການຈັດຫາງານ ອະນຸຍາດໃຫ້ເກັບ ດັ່ງນີ້:

- ຄ່າບໍລິການໃນການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຂອງວິສາຫະກິດບໍລິການຈັດຫາງານ ໃຫ້ເກັບບໍ່ເກີນ 3% ຂອງເງິນເດືອນທຸກເດືອນຕາມສັນຍາ ໜຶ່ງຄົນ ໂດຍໃຫ້ເກັບນໍາຜູ້ໃຊ້ແຮງງານ;
- ຄ່າບໍລິການສໍາລັບການຈັດຫາງານພາຍໃນປະເທດຂອງວິສາຫະກິດບໍລິການຈັດຫາງານ ເທົ່າກັບ 50% ຂອງເງິນເດືອນໆ ທໍາອິດຂອງຜູ້ອອກແຮງງານ ແລະ ເກັບຄັ້ງດຽວເທົ່ານັ້ນ ໂດຍໃຫ້ເກັບນໍາຜູ້ໃຊ້ແຮງງານ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 37 ຂໍ້ຫ້າມສໍາລັບອົງການຄຸ້ມຄອງວຽກງານແຮງງານ**

ຫ້າມອົງການຄຸ້ມຄອງວຽກງານແຮງງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດ ແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;
2. ອອກໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານບໍ່ຖືກຕ້ອງກັບກົດໝາຍ ແລະ ລະບຽບການ;
3. ການກົດໜ່ວງຖ່ວງດຶງເອກະສານ;
4. ສ້າງຜົນປະໂຫຍດໂດຍທາງກົງ ແລະ ທາງອ້ອມຈາກການບໍລິການຈັດຫາງານ;
5. ເມີນເສີຍ ຫຼື ຂັດຂວາງ ວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
6. ການສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໂດຍສະເພາະຄວາມຕ້ອງການແຮງງານໃນຕະຫຼາດແຮງງານຢູ່ຕ່າງປະເທດ ໃຫ້ວິສາຫະກິດບໍລິການຈັດຫາງານ ເພື່ອຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
7. ປອມແປງ ຫຼື ອອກເອກະສານ ໂດຍບໍ່ຖືກຕ້ອງ;
8. ອຳນວຍຄວາມສະດວກໃຫ້ວິສາຫະກິດບໍລິການຈັດຫາງານເຄື່ອນໄຫວແບບຜິດກົດໝາຍ ແລະ ລະບຽບການ;
9. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈົນຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
10. ຂໍເອົາ, ຮຽກເອົາ, ທວງເອົາ, ໃຫ້ ຫຼື ຮັບເອົາສິນບົນ ຫຼື ເປັນສື່ກາງ ໃນການໃຫ້ສິນບົນ;
11. ຮຽກ ຫຼື ທວງເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບ ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 38 ຂໍ້ຫ້າມສຳລັບວິສາຫະກິດບໍລິການຈັດຫາງານ

ຫ້າມວິສາຫະກິດບໍລິການຈັດຫາງານ ມີພຶດຕິກຳ ດັ່ງນີ້:

1. ໃຫ້ຜູ້ອື່ນນຳໃຊ້ ໃບອະນຸຍາດ ໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານຂອງຕົນ;
2. ໃຫ້ບໍລິການ ໂດຍສ້າງເງື່ອນໄຂກີດກັ້ນ ການສະໝັກເຮັດວຽກ ໂດຍສະເພາະການຈຳແນກ ເພດ, ຊົນເຜົ່າ, ສາດສະໜາ ແລະ ການບັງຄັບ ທາງກົງ ຫຼື ທາງອ້ອມ;
3. ໃຫ້ບໍລິການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;
4. ປົກປິດ ຂໍ້ມູນ ຂ່າວສານກ່ຽວກັບເງື່ອນໄຂໃນການເຮັດວຽກຢູ່ພາຍໃນ ແລະ ຢູ່ຕ່າງປະເທດ;
5. ສ້າງເງື່ອນໄຂທີ່ເປັນປັດໄຈສ່ຽງ ເຮັດໃຫ້ຜູ້ອອກແຮງງານຖືກກົດຂີ່ຂູດຮີດ ແລະ ຕົກເປັນເຫຍື່ອຂອງການຄ້າມະນຸດ;
6. ຮັບສະໝັກເອົາແຮງງານຈາກແຂວງ ໂດຍບໍ່ແຈ້ງໃຫ້ແຂວງ ຊາບ;
7. ເກັບຄ່າບໍລິການຈັດຫາງານນຳຜູ້ອອກແຮງງານ;
8. ເກັບຄ່າບໍລິການຈັດຫາງານເກີນອັດຕາທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
9. ເກັບເງິນຄ່າມັດຈຳ ຫຼື ໃຫ້ນຳເອົາວັດຖຸສິ່ງຂອງ ທີ່ມີຄ່າມັດຈຳ ເພື່ອຈັດສົ່ງໄປເຮັດວຽກຢູ່ພາຍໃນ ແລະ ຕ່າງປະເທດ ນຳຜູ້ອອກແຮງງານ;
10. ສ້າງສັນຍາ ທີ່ມີລັກສະນະບັງຄັບ ຫຼື ເປັນຂໍ້ຜູກມັດ ຜູ້ອອກແຮງງານ;
11. ໂຄສະນາການບໍລິການ ທີ່ເກີນຄວາມເປັນຈິງ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 8
## ອົງການຄຸ້ມຄອງ ວຽກງານແຮງງານ

**ມາດຕາ 39 ອົງການຄຸ້ມຄອງວຽກງານແຮງງານ**

ອົງການຄຸ້ມຄອງວຽກງານແຮງງານ ໝາຍເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ແລະ ນະຄອນ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

- ຄົ້ນຄ້ວາຄຳຮ້ອງ ແລະ ອອກໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດບໍລິການຈັດຫາງານຢູ່ພາຍໃນປະເທດ ແລະ ຈັດສົ່ງໄປຕ່າງປະເທດ;
- ຄົ້ນຄ້ວາ ແລະ ພິຈາລະນາການຂໍຕໍ່ໃບອະນຸຍາດ ຫຼື ຍຸບເລີກ ການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ;
- ພິຈາລະນາການສະເໜີຂໍຕັ້ງສາຂາຂອງວິສາຫະກິດບໍລິການຈັດຫາງານ;
- ຕິດຕາມ, ກວດກາ ແລະ ປະເມີນ ການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ ຕາມກົດໝາຍ ແລະ ລະບຽບການ;
- ດຳເນີນມາດຕະການຕໍ່ວິສາຫະກິດບໍລິການຈັດຫາງານທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ໃຫ້ຄຳແນະນຳ ການສ້າງແຜນ ແລະ ຈັດຝຶກຍົກລະດັບພະນັກງານຂອງວິສາຫະກິດບໍລິການຈັດຫາງານໃຫ້ມີຄວາມເຂັ້ມແຂງ;
- ປັບປຸງລະບົບ ແລະ ກົນໄກ ການຈັດຫາງານໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;
- ອະນຸມັດບັນຊີລາຍຊື່, ໃບອະນຸຍາດການຈັດສົ່ງ ແລະ ອອກບັດອະນຸຍາດໃຫ້ຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
- ຕິດຕາມຜູ້ອອກແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ;
- ປະສານງານກັບພາກສ່ວນທີ່ກ່ຽວຂ້ອງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ຄວາມຊ່ວຍເຫຼືອຜູ້ອອກແຮງງານ;
- ຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ອອກແຮງງານລາວທີ່ກັບຈາກຕ່າງປະເທດເຂົ້າເຖິງການມີວຽກເຮັດງານທຳພາຍໃນປະເທດຕາມສີມື ແລະ ຄວາມສາມາດ;
- ສ້າງ ແລະ ປັບປຸງຄູ່ມືຝຶກອົບຮົມກ່ອນການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
- ປະຕິບັດສິດ, ໜ້າທີ່ອື່ນໆ ຕາມພາລະບົດບາດ ຄວາມຮັບຜິດຊອບຂອງຕົນ ແລະ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ນະຄອນຫຼວງວຽງຈັນ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ຄົ້ນຄ້ວາຄຳຮ້ອງຂໍອະນຸຍາດເຄື່ອນໄຫວວິສາຫະກິດບໍລິການຈັດຫາງານຢູ່ພາຍໃນປະເທດ ແລະ ຈັດສົ່ງໄປຕ່າງປະເທດ ຢູ່ໃນທ້ອງຖິ່ນຕົນ ເພື່ອສະເໜີຜ່ານກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາອະນຸມັດ;

- ຢັ້ງຢືນການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ ເວລາສະເໜີຕໍ່ໃບອະນຸຍາດເຄື່ອນໄຫວວຽກງານບໍລິການຈັດຫາງານ;

- ຄົ້ນຄວ້າ ແລະ ສະເໜີເຖິງພາກສ່ວນກ່ຽວຂ້ອງ ກ່ຽວກັບການສ້າງຕັ້ງສາຂາວິສາຫະກິດບໍລິການຈັດຫາງານ ໃນທ້ອງຖິ່ນຕົນ;

- ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານທີ່ຕັ້ງຢູ່ທ້ອງຖິ່ນຂອງຕົນ ເພື່ອລາຍງານໃຫ້ອົງການຄຸ້ມຄອງວຽກງານແຮງງານຂັ້ນສູນກາງຊາບ ແຕ່ລະໄລຍະ;

- ປະສານງານ ແລະ ອໍານວຍຄວາມສະດວກໃຫ້ວິສາຫະກິດບໍລິການຈັດຫາງານ ໃນການລະດົມເອົາຜູ້ອອກແຮງງານໃນທ້ອງຖິ່ນຂອງຕົນ ເຂົ້າເຮັດວຽກຢູ່ພາຍໃນປະເທດ ຫຼື ໄປເຮັດວຽກຢູ່ຕ່າງປະເທດ ເພື່ອດຸ່ນດ່ຽງແຮງງານບໍ່ໃຫ້ມີກໍລະນີຂາດແຄນແຮງງານ ແລະ ເກີດການວ່າງງານຢູ່ທ້ອງຖິ່ນຂອງຕົນ;

- ຕິດຕາມການຝຶກອົບຮົມກ່ອນການຈັດສົ່ງ ແລະ ຢັ້ງຢືນບັນຊີລາຍຊື່ຂອງຜູ້ອອກແຮງງານພາຍໃນແຂວງຂອງຕົນກ່ອນການຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ;

- ຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ອອກແຮງງານລາວ ທີ່ສິ້ນສຸດສັນຍາການເຮັດວຽກຢູ່ຕ່າງປະເທດ ປະກອບອາຊີບ ພາຍໃນປະເທດ, ສືບຕໍ່ຍົກລະດັບ ແລະ ພັດທະນາສີມືແຮງງານ  ພ້ອມທັງຖ່າຍທອດຄວາມຮູ້ ແລະ ຄວາມສາມາດ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ;

- ຮັບ ແລະ ພິຈາລະນາແກ້ໄຂ ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ;

- ໃຫ້ຄໍາແນະນໍາ ແລະ ເຜີຍແຜ່ຂໍ້ມູນໃຫ້ຜູ້ອອກແຮງງານໃນການເຂົ້າເຮັດວຽກທີ່ປອດໄພ, ມີລາຍໄດ້ ແລະ ມີສະຫວັດດີການທີ່ດີ ເພື່ອຫຼຸດຜ່ອນຄວາມທຸກຍາກ;

- ອໍານວຍຄວາມສະດວກໃຫ້ພະນັກງານ ຂອງວິສາຫະກິດບໍລິການດຈັດຫາງານ ທີ່ມີບັດອະນຸຍາດເຄື່ອນໄຫວການຈັດຫາງານ ທີ່ອອກໃຫ້ໂດຍກົມພັດທະນາສີມືແຮງງານ ແລະ ຈັດຫາງານ;

- ຄົ້ນຄ້ວາ ແລະ ນໍາສະເໜີວິທີປັບປຸງກົນໄກການຈັດຫາງານທີ່ສອດຄ່ອງກັບຕະຫຼາດແຮງງານຂອງທ້ອງຖິ່ນຂອງຕົນ;

- ຄົ້ນຄ້ວາ ແລະ ສະເໜີອົງການຄຸ້ມຄອງວຽກງານແຮງງານ ຂັ້ນສູນກາງ ເພື່ອຂໍຕໍ່ອະນຸຍາດ ຫຼື ຍຸບເລີກວິສາຫະກິດບໍລິການຈັດຫາງານ ທີ່ຕັ້ງຢູ່ໃນທ້ອງຖິ່ນຂອງຕົນ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມພາລະບົດບາດ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 42  ສິດ ແລະ ໜ້າທີ່ ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ແລະ ນະຄອນ**

- ເຜີຍແຜ່, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດລະບຽບການຕ່າງໆ ກ່ຽວກັບການຈັດຫາງານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

- ປະສານສົມທົບກັບບັນດາຫ້ອງການ, ອົງການຈັດຕັ້ງຕ່າງໆ, ວິສາຫະກິດບໍລິການຈັດຫາງານໃນການລະດົມເອົາຜູ້ອອກແຮງງານເຂົ້າເຮັດວຽກໃນທ້ອງຖິ່ນຂອງຕົນ ຫຼື ໄປເຮັດວຽກຢູ່ຕ່າງປະເທດ ເພື່ອດຸ່ນດ່ຽງແຮງງານບໍ່ໃຫ້ມີກໍລະນີຂາດແຄນແຮງງານ ແລະ ເກີດການວ່າງງານຢູ່ໃນເມືອງ ຫຼື ນະຄອນ;

- ຕິດຕາມ ແລະ ຊຸກຍູ້ ການເຄື່ອນໄຫວຂອງບັນດາວິສາຫະກິດບໍລິການຈັດຫາງານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

- ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ;

- ຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ອອກແຮງງານລາວ ທີ່ສິ້ນສຸດສັນຍາການເຮັດວຽກຢູ່ຕ່າງປະເທດ ປະກອບອາຊີບ ພາຍໃນປະເທດ, ສືບຕໍ່ຍົກລະດັບ ແລະ ພັດທະນາສີມືແຮງງານ ພ້ອມທັງຖ່າຍທອດຄວາມຮູ້ ແລະ ຄວາມສາມາດ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ;

- ເກັບກຳຂໍ້ມູນຄວາມຕ້ອງການແຮງງານ ແລະ ການສະໜອງແຮງງານ ພາຍໃນເມືອງ ແລະ ນະຄອນຂອງຕົນ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມພາລະບົດບາດ ແລະ ການມອບໝາຍຂອງຂັ້ນເທິງ.

## ໝວດທີ 9
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 43 ການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ແມ່ນການຮັບ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸນຄົນ ຫຼື ການຈັດຕັ້ງ ກ່ຽວກັບການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ ຫຼື ວິສາຫະກິດບໍລິການຈັດຫາງານ ສະເໜີແກ້ໄຂຂໍ້ຂັດແຍ່ງ ກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບການບໍລິການຈັດຫາງານ ທີ່ທັງສອງຝ່າຍໄດ້ປຶກສາຫາລື ແລະ ບໍ່ສາມາດຕົກລົງແກ້ໄຂບັນຫາກັນໄດ້.

### ມາດຕາ 44 ການຮັບ ແລະ ແກ້ໄຂຂໍ້ຂັດແຍ່ງ

ຂັ້ນຕອນການຮັບ ແລະ ແກ້ໄຂຂໍ້ຂັດແຍ່ງ ໃຫ້ປະຕິບັດ ດັ່ງນີ້:

1. ຍື່ນໜັງສືສະເໜີ ພ້ອມເອກະສານທີ່ກ່ຽວຂ້ອງ ທີ່ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ;
2. ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງວຽງຈັນ ຄົ້ນຄວ້າແກ້ໄຂຂໍ້ຂັດແຍ່ງ ແລ້ວລາຍງານໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮັບຊາບ. ໃນກໍລະນີບໍ່ສາມາດແກ້ໄຂໄດ້ ໃຫ້ຍື່ນສຳນວນເອກະສານ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາ;
3. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄົ້ນຄວ້າແກ້ໄຂຂໍ້ຂັດແຍ່ງ. ໃນກໍລະນີບໍ່ສາມາດແກ້ໄຂໄດ້ ຈະໄດ້ປະສານກັບພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂ ຫຼື ຍື່ນສຳນວນຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາແກ້ໄຂ.

### ມາດຕາ 45 ຂໍ້ຂັດແຍ່ງ ທີ່ເກີດຂຶ້ນຢູ່ປະເທດຮັບ

ຂໍ້ຂັດແຍ່ງທີ່ເກີດຂຶ້ນກັບແຮງງານຢູ່ປະເທດທີ່ຮັບເອົາແຮງງານໄປເຮັດວຽກ ໂດຍຜ່ານການຈັດສົ່ງຂອງວິສາຫະກິດບໍລິການຈັດຫາງານ ແມ່ນໃຫ້ປະຕິບັດຕາມກົດໝາຍ, ລະບຽບການກ່ຽວຂ້ອງຂອງປະເທດຮັບ, ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາຮ່ວມມື ຂອງອົງການຈັດສົ່ງ ແລະ ລັດຖະບານ.

## ໝວດທີ 10
## ການຕິດຕາມ ແລະ ກວດກາ

### ມາດຕາ 46 ການຕິດຕາມ ແລະ ກວດກາ

ອົງການຄຸ້ມຄອງວຽກງານແຮງງານ ເປັນຜູ້ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ.

**ມາດຕາ 47 ເນື້ອໃນການກວດກາ**

ການກວດກາການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການບໍລິການຈັດຫາງານ;
2. ການເຄື່ອນໄຫວຮັບສະໝັກງານ;
3. ການສະໜອງຜູ້ອອກແຮງງານໃຫ້ຫົວໜ່ວຍແຮງງານຢູ່ພາຍໃນ ແລະ ຢູ່ຕ່າງປະເທດ;
4. ການຕິດຕາມ ແລະ ໃຫ້ການຊ່ວຍເຫຼືອຜູ້ອອກແຮງງານ;
5. ການປະຕິບັດໜ້າທີ່ຂອງວິສາຫະກິດບໍລິການຈັດຫາງານຕາມທີ່ກຳນົດໄວ້ໃນມາດຕາ 19;
6. ການປະຕິບັດພັນທະດ້ານພາສີ-ອາກອນ ແລະ ປະກັນສັງຄົມ.

**ມາດຕາ 48 ຮູບການກວດກາ**

ຮູບການການກວດກາການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານ ມີສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍ ທີ່ຖືກກວດກາ ຮູ້ລ່ວງໜ້າ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 49 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ.**

ວິສາຫະກິດບໍລິການຈັດຫາງານ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໂດຍໄດ້ຮັບການຢັ້ງຢືນຈາກສະພາບໍລິຫານ ແລະ ອົງການຄຸ້ມຄອງວຽກງານແຮງງານ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 50 ເງື່ອນໄຂຂອງຜູ້ທີ່ໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ.**

ວິສາຫະກິດບໍລິການຈັດຫາງານທີ່ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ ຕ້ອງມີເງື່ອນໄຂ ດັ່ງນີ້:

- ສາມາດບັນລຸໂຕເລກຄາດໝາຍຈັດຫາງານຕາມການມອບໝາຍຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ຕິດຕາມ, ຄຸ້ມຄອງ ແລະ ໃຫ້ຄວາມຊ່ວຍເຫຼືອຜູ້ອອກແຮງງານເປັນຢ່າງດີ;
- ຜູ້ອອກແຮງງານທີ່ຖືກຈັດສົ່ງບໍ່ຖືກກົດຂີ່ຂູດຮີດແຮງງານ ແລະ ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ;

- ບໍ່ມີການຮ້ອງຟ້ອງຈາກຜູ້ອອກແຮງງານທີ່ຖືກຈັດສົ່ງ;
- ລາຍງານການເຄື່ອນໄຫວວຽກງານບໍລິການຈັດຫາງານ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມຊາບຢ່າງປົກກະຕິ;
- ປະຕິບັດໜ້າທີ່ຂອງວິສາຫະກິດບໍລິການຈັດຫາງານຕາມທີ່ກຳນົດໄວ້ໃນມາດຕາ 19 ຢ່າງມີປະສິດທິຜົນ.

## ມາດຕາ 51 ມາດຕະການຕໍ່ຜູ້ລະເມີດ

ມາດຕະການຕໍ່ຜູ້ລະເມີດ ມີດັ່ງນີ້:

1. ອົງການຄຸ້ມຄອງວຽກງານແຮງງານທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກດຳເນີນມາດຕະການຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ວິສາຫະກິດບໍລິການຈັດຫາງານ ທີ່ລະເມີດຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ຕາມຂັ້ນຕອນ ດັ່ງລຸ່ມນີ້:
   ຄັ້ງທີ 1 ແນະນຳສຶກສາອົບຮົມ, ໃຊ້ແທນຄືນ ແລະ ປັບໄໝ 10% ຂອງມູນຄ່າທີ່ໃຫ້ໃຊ້ແທນຄືນ;
   ຄັ້ງທີ 2 ໃຊ້ແທນຄືນ, ປັບໄໝເພີ່ມ 30% ຂອງມູນຄ່າທີ່ໃຫ້ໃຊ້ແທນຄືນ;
   ຄັ້ງທີ 3 ໃຊ້ແທນຄືນ, ປັບໄໝເພີ່ມ 60% ຂອງມູນຄ່າທີ່ໃຫ້ໃຊ້ແທນຄືນ;
   ຄັ້ງທີ 4 ສັ່ງໂຈະກິດຈະການຊົ່ວຄາວ;
   ຄັ້ງທີ 5 ຖອນໃບອະນຸຍາດສ້າງຕັ້ງວິສາຫະກິດບໍລິການຈັດຫາງານ.
   ກໍລະນີມີຄວາມເສຍຫາຍເກີດຂຶ້ນຕໍ່ກັບຜູ້ອອກແຮງງານ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ວິສາຫະກິດບໍລິການຈັດຫາງານ ຈະຕ້ອງຊົດໃຊ້ຜົນເສຍຫາຍຄືນ ໃນແຕ່ລະກໍລະນີ ແລະ ຈະຖືກດຳເນີນຄະດີຕາມກົດໝາຍ ແລະ ລະບຽບການ.
3. ວິສາຫະກິດບໍລິການຈັດຫາງານ ແລະ ຄູ່ສັນຍາຮັບເອົາແຮງງານ ຫາກບໍ່ປະຕິບັດຕາມສັນຍາ ຈະຖືກໃຊ້ແທນຄືນ ຫຼື ສົ່ງໃຫ້ສານຕັດສິນ;
4. ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຄື່ອນໄຫວບໍລິການຈັດຫາງານ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມລະບຽບກົດໝາຍ ຈະຖືກສຶກສາອົບຮົມ ແລະ ປັບໄໝເປັນເງິນ 10.000.000 ກີບ ຕໍ່ຄັ້ງ, ພ້ອມທັງສັ່ງຢຸດເຊົາການເຄື່ອນໄຫວທັນທີ, ກໍລະນີມີຄວາມເສຍຫາຍເກີດຂຶ້ນກັບຜູ້ອອກແຮງງານ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ຈະຖືກດຳເນີນຄະດີຕາມກົດໝາຍ ແລະ ລະບຽບການ;
5. ບຸກຄົນທີ່ມາໃຊ້ບໍລິການນຳວິສາຫະກິດບໍລິການຈັດຫາງານ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ ໃຊ້ແທນຄ່າເສຍຫາຍ ຫຼື ຖືກດຳເນີນຄະດີຕາມກົດໝາຍ.

# ໝວດທີ 12
# ບົດບັນຍັດສຸດທ້າຍ

## ມາດຕາ 52 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການຈັດຫາງານ, ບັນດາພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ແລະ ນະຄອນ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 53 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 043/ຣສສ, ລົງວັນທີ 12 ມັງກອນ 2010 ເຊິ່ງທຸກຂໍ້ຕົກລົງທີ່ຜ່ານມາທີ່ຂັດກັບເນື້ອໃນ ຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ມີຜົນບັງຄັບໃຊ້ ນັບຕັ້ງແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ໃບຄຳ ຂັດທິຍະ